ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------

ກະຊວງຍຸຕິທຳ
ກົມໂຄສະນາເຜີຍແຜ່ກົດໝາຍ

ເລກທີ 111 /ກຍ.ກຄຜ
ນະຄອນຫຼວງວຽງຈັນ, ວັນທີ 11 ເມສາ 2018

# ບົດລາຍງານ

**ຮຽນ:** ທ່ານລັດຖະມົນຕີກະຊວງຍຸຕິທຳ

**ເລື່ອງ:** ການລົງພົບປະ ແລະ ປຶກສາຫາລື ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ 4 ແຂວງພາກໃຕ້

## I. ສະພາບລວມ

ໃນວັນທີ 27-30 ມີນາ 2018 ຄະນະພັກ-ຄະນະນຳກະຊວງຍຸຕິທຳ ນຳໂດຍ ທ່ານ ບຸນສະຫວາດ ບຸບຜາ ຄະນະພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທຳ ພ້ອມດ້ວຍ ທ່ານ ນາງ ຄອນສະຫວັນ ສາວະລີ, ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ແລະ ວິຊາການທີ່ຮັບຜິດຊອບວຽກງານຈົດໝາຍເຫດທາງລັດຖະການ ໄດ້ລົງຕິດຕາມ, ຊຸກຍູ້ວຽກງານຈົດໝາຍເຫດທາງລັດຖະການ ກັບຄະນະພັກ-ຄະນະນຳ 4 ແຂວງພາກໃຕ້ ຄື: ແຂວງອັດຕະປື, ແຂວງເຊກອງ, ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ ຜູ້ເຂົ້າຮ່ວມປະກອບມີ ຜູ້ປະສານງານຈາກຫ້ອງວ່າການປົກຄອງແຂວງ, ພະແນກຍຸຕິທຳແຂວງ ແລະ ຜູ້ຕາງໜ້າໂຄງການ LUNA II , ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 56 ທ່ານ, ຍິງ 15 ທ່ານ.

## II. ສະພາບການເຄື່ອນໄຫວຢູ່ທ້ອງຖິ່ນ

### 1. ວັນທີ 27 ມີນາ 2018 ເຄື່ອນໄຫວວຽກງານຢູ່ ແຂວງອັດຕະປື

- ໃນຕອນເຊົ້າຂອງວັນທີ 27 ມີນາ 2018 ທ່ານ ບຸນສະຫວາດ ບຸບຜາ ຄະນະພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທຳ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະ ແລະ ປຶກສາຫາລື ນຳ ທ່ານ ພອນສະໄໝ ມຽງລາວັນ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງອັດຕະປື ພ້ອມດ້ວຍຄະນະ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ, ໃນທີ່ປະຊຸມ ທ່ານຮອງລັດຖະມົນຕີກະຊວງຍຸຕິທຳໄດ້ກ່າວເຖິງຈຸດປະສົງ ແລະ ສະເໜີກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການໂດຍຫຍໍ້ ຊຶ່ງທ່ານໄດ້ເວົ້າເຖິງຄວາມໝາຍ ຄວາມສຳຄັນຂອງວຽກງານດັ່ງກ່າວ ຢູ່ໃນກົດໝາຍວ່າດ້ວຍ ການສ້າງນິຕິກຳ ກໍໄດ້ກຳນົດຢ່າງລະອຽດ ແລະ ຈະແຈ້ງແລ້ວວ່າ ບັນດານິຕິກຳທີ່ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ເອົາມາລົງຈົດໝາຍເຫດທາງລັດຖະການ ເພື່ອປະກາດຜົນສັກສິດ ທັງເປັນການໂຄສະນາເຜີຍແຜ່ບັນດານິຕິກຳໃຫ້ບຸກຄົນທົ່ວໄປໄດ້ຮັບຮູ້ ແລະ ເປັນການເຊື່ອມໂຍງກັບພາກພື້ນ ແລະ ສາກົນອີກດ້ວຍ.

- ທ່ານ ດຣ. ບຸນເປັນ ສັງສົມສັກ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ທັງເປັນຫົວໜ້າຜູ້ປະສານງານ ກໍໄດ້ລາຍງານສະພາບ ການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການລະບົບເອເລັກໂຕຣນິກໃນໄລຍະຜ່ານມາ ທ່ານໄດ້ຕີລາຄາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍໃນການປະຕິບັດວຽກງານດັ່ງກ່າວ ທ່ານໄດ້ກ່າວ

ວ່າວຽກງານຈົດໝາຍເຫດທາງລັດຖະການໄດ້ຮັບຜົນດີ ຍ້ອນໄດ້ຮັບການຊີ້ນໍານໍາພາຈາກຄະນະນໍາຂອງແຂວງ, ຄະນະຫ້ອງວ່າການ, ຄະນະພະແນກຍຸຕິທໍາແຂວງເປັນປົກກະຕິ ໃນການເຄື່ອນໄຫວວຽກງານ, ພາຍຫຼັງທີ່ໄດ້ຜ່ານການຝຶກອົບຮົມແລ້ວ ຄະນະຜູ້ປະສານງານຂັ້ນແຂວງ ກໍໄດ້ມີການຕິດຕາມ, ເກັບກໍານິຕິກໍາ ເພື່ອສົ່ງມາລົງຈົດໝາຍເຫດທາງລັດຖະການໃຫ້ທັນກັບກໍານົດເວລາ ເຖິງແມ່ນວ່າຈະມີການຍົກຍ້າຍພະນັກງານງານທີ່ຮັບຜິດຊອບໄປປະຈໍາການບ່ອນອື່ນກໍຕາມ ທ່ານກໍສະໜອງບຸກຄະລາກອນເຂົ້າໃນວຽກງານດັ່ງກ່າວນີ້ເປັນປົກກະຕິ.

- ທ່ານ ນ. ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ຊຶ່ງທ່ານໄດ້ນໍາສະເໜີບາງມາດຕາທີ່ໄດ້ສ້າງ ແລະ ປັບປຸງໃໝ່ ເປັນຕົ້ນ ໄດ້ເນັ້ນກ່ຽວກັບ ປະເພດນິຕິກໍາຂອງແຂວງທີ່ຈະເອົາມາລົງຈົດໝາຍເຫດທາງລັດຖະການ, ການແຕ່ງຕັ້ງຜູ້ປະສານງານຂອງແຂວງ, ສິດ ແລະ ໜ້າທີ່ຂອງຜູ້ປະສານງານມີຄືແນວໃດ?. ຈາກນັ້ນກໍໄດ້ສະເໜີເຖິງຜູ້ປະສານງານ ຄວນມີການປະສານສົມທົບຊຶ່ງກັນ ແລະ ກັນ ເພື່ອເຮັດໃຫ້ວຽກງານມີຄວາມຕໍ່ເນື່ອງ ຊຶ່ງໄລຍະຜ່ານມາແມ່ນພວກເຮົາໄດ້ຕັ້ງເປັນກຸ່ມວອດແອັບຂອງຜູ້ປະສານງານແຕ່ລະພາກ ເພື່ອແລກປ່ຽນບົດຮຽນ ແລະ ສອບຖາມນິຕິກໍາທີ່ຈະສົ່ງມາລົງຈົດໝາຍເຫດທາງລັດຖະການ ເພື່ອເຮັດໃຫ້ວຽກງານມີປະສິດທິຜົນຂຶ້ນກວ່າເກົ່າ.

- ທ່ານ ພອນສະໄໝ ມຽງລາວັນ ຄະນະປະຈໍາພັກແຂວງ, ຮອງເຈົ້າແຂວງອັດຕະປື ໄດ້ກ່າວວ່າ ກອງປະຊຸມໃນຄັ້ງນີ້ແມ່ນມີຄວາມສໍາຄັນຫຼາຍ ເນື່ອງຈາກວ່າວຽກງານດັ່ງກ່າວເປັນວຽກງານໃໝ່ສໍາລັບພວກຂ້າພະເຈົ້າ ແຕ່ກໍໄດ້ຈັດຕັ້ງປະຕິບັດມາດົນນານແລ້ວ, ຂ້າພະເຈົ້າມີຄວາມຮູ້ສຶກດີໃຈທີ່ທາງຄະນະນໍາກະຊວງຍຸຕິທໍາໄດ້ເອົາໃຈໃສ່ລົງມາຕິດຕາມ ແລະ ຊຸກຍູ້ ວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ ທ່ານຍັງໄດ້ກ່າວຕື່ມອີກວ່າ ເຖິງແຂວງເຮົາເຮັດໄດ້ດີແລ້ວແຕ່ກໍຕ້ອງໄດ້ຄົ້ນຄວ້າຕື່ມໃຫ້ມັນເລິກເຊິ່ງ ຕ້ອງເຮັດໃຫ້ທັນການ ເຖິງແມ່ນວ່າໄດ້ສົ່ງນິຕິກໍາໄປເປັນຮ້ອຍສະບັບກໍຕາມແຕ່ບໍ່ທັນເຫດການ ຫຼື ສິ່ງບໍ່ເປັນປົກກະຕິກໍບໍ່ມີຄວາມໝາຍ ເພາະສະນັ້ນ ການປະສານງານຕ້ອງໃຫ້ສະໝໍ່າສະເໝີໃຫ້ສົມກັບການຍ້ອງຍໍ ແລະ ສືບຕໍ່ປະຕິບັດໃຫ້ດີຂຶ້ນເລື້ອຍໆ.

- ໃນຕອນທ້າຍ ທ່ານ ຮອງລັດຖະມົນຕີກະຊວງຍຸຕິທໍາ ກໍໄດ້ກ່າວຍ້ອງຍໍຊົມເຊີຍຕໍ່ການປະຕິບັດວຽກງານດັ່ງກ່າວ ເຫັນໄດ້ວ່າ ແຂວງອັດຕະປື ແມ່ນປະຕິບັດໄດ້ດີພໍສົມຄວນ ສົມຄວນເອົາເປັນແບບຢ່າງໃຫ້ແຂວງອື່ນ ຂໍໃຫ້ຮັກສາມູນເຊື້ອເອົາໄວ້ ປະຕິບັດວຽກງານໃຫ້ດີກວ່າເກົ່າ ແລະ ຫຼັງຈາກນັ້ນທາງຄະນະນໍາຂອງກະຊວງຍຸຕິທໍາກໍໄດ້ມອບໃບຍ້ອງຍໍຂອງທ່ານລັດຖະມົນຕີກະຊວງຍຸຕິທໍາ ແລະ ທາງໂຄງການ LUNA II ກໍໄດ້ມອບເຄື່ອງຄອມພິວເຕີ 1 ໜ່ວຍ ແລະ ເຄື່ອງພິມເອກະສານ 1 ໜ່ວຍ ໃຫ້ຄະນະຜູ້ປະສານງານຈົດໝາຍເຫດທາງລັດຖະການ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມສະດວກ ແລະ ມີປະສິດທິຜົນ.

## 2. <u>ວັນທີ 28 ມີນາ 2018 ເຄື່ອນໄຫວວຽກງານຢູ່ ແຂວງເຊກອງ</u>

- ໃນຕອນເຊົ້າຂອງວັນທີ 28 ມີນາ 2018 ທ່ານ ບຸນສະຫວາດ ບຸບຜາ ຄະນະພັກກະຊວງ, ຮອງລັດຖະມົນຕີກະຊວງຍຸຕິທໍາ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະ ແລະ ປຶກສາຫາລື ນໍາ ທ່ານ ພັອ ສົມໄຊ ພູລະຄໍາມະນີ ຄະນະປະຈໍາພັກແຂວງ, ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ ກ່ຽວກັບວຽກງານຈົດໝາຍເຫດທາງລັດຖະການ, ໃນທີ່ປະຊຸມ ທ່ານ ຮອງລັດຖະມົນຕີກະຊວງຍຸຕິທໍາ ໄດ້ກ່າວຈຸດປະສົງ ໃນການລົງມາພົບປະ ແລະ ເຄື່ອນໄຫວວຽກງານ ແມ່ນເພື່ອມາປຶກສາຫາລື, ແລກປ່ຽນບົດຮຽນ ແລະ ຊຸກຍູ້ ໃນການແກ້ໄຂຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງຕ່າງໆ. ຊຶ່ງທ່ານໄດ້ເວົ້າເຖິງວຽກງານຈົດໝາຍເຫດທາງລັດຖະການເປັນວຽກງານໜຶ່ງທີ່ມີຄວາມສໍາຄັນ, ໂດຍອີງຕາມກົດໝາຍວ່າດ້ວຍ ການສ້າງນິຕິກໍາ ນິຕິກໍາຂັ້ນແຂວງທີ່ຕ້ອງສົ່ງມາພິມລົງໃນຈົດໝາຍເຫດທາງລັດຖະການປະກອບມີນິຕິກໍາ 3 ປະເພດ ຄື: ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາຂອງທ່ານເຈົ້າແຂວງ. ແຕ່ສັງເກດເຫັນວ່ານິຕິກໍາຂອງແຂວງ ແມ່ນຍັງມີຈໍານວນໜ້ອຍຢູ່, ສະນັ້ນ, ຢາກຂໍສະເໜີນໍາຜູ້ປະສານງານຂອງແຂວງເຊກອງຄວນເພີ່ມທະວີຕື່ມ

ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກໍຄືກະຊວງຍຸຕິທຳ ໃນການສັງລວມນິຕິກຳຂອງແຂວງມາລົງໃນຈົດໝາຍເຫດທາງລັດຖະການໃຫ້ເພີ່ມຂຶ້ນກວ່າເກົ່າ.

- ທ່ານ ນ. ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ໄດ້ນຳສະເໜີກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ ແລະ ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ນອກນັ້ນ, ທ່ານຍັງໄດ້ອະທິບາຍເຖິງພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຜູ້ປະສານງານ, ສະຕິຄວາມຮັບຜິດຊອບໃນການສົ່ງນິຕິກຳມາລົງໃນເວັບໄຊ໌ຈົດໝາຍເຫດທາງລັດຖະການ ຊຶ່ງຫ້ອງວ່າການປົກຄອງແຂວງເປັນຈຸດໃຈກາງໃນການເຂົ້າ-ອອກຂອງນິຕິກຳ ຊຶ່ງເປັນຂໍ້ສະດວກໃຫ້ຜູ້ປະສານງານແຂວງ ຕ້ອງສາມາດສັງລວມໄດ້ ໃນນິຕິກຳແຕ່ລະສະບັບ ທີ່ອອກໂດຍເຈົ້າແຂວງ ແລະ ສາມາດດຳເນີນການນຳສົ່ງ ແລະ ປະກາດຜົນສັກສິດຂອງນິຕິກຳຢ່າງເປັນປົກກະຕິ.

- ທ່ານ ອຸ່ນເຮືອນ ໄຊຍະວົງ ຮອງຫົວໜ້າຫ້ອງວ່າການປົກຄອງແຂວງ ທັງເປັນຫົວໜ້າຜູ້ປະສານງານ ໄດ້ລາຍງານສະພາບລວມຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ທ່ານໄດ້ກ່າວວ່າ ນິຕິກຳທີ່ເປັນລັກສະນະທົ່ວໄປນັ້ນກຳລັງຢູ່ໃນຂັ້ນຕອນຜ່ານ ສະພາປະຊາຊົນແຂວງ ຖ້າວ່າມີການຮັບຮອງແລ້ວຈຶ່ງຈະສົ່ງມາໃຫ້ທາງກະຊວງຍຸຕິທຳ, ຫຼັງຈາກນັ້ນ, ທ່ານກໍໄດ້ລາຍງານເຖິງ ຂໍ້ສະດວກ, ບັນຫາ, ຂໍ້ຄົງຄ້າງ, ວິທີແກ້ໄຂ ແລະ ທິດທາງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

### 3. <u>ວັນທີ 29 ມີນາ 2018 ເຄື່ອນໄຫວວຽກງານຢູ່ ແຂວງຈຳປາສັກ</u>

- ໃນຕອນເຊົ້າ ຂອງວັນທີ 29 ມີນາ 2018 ທ່ານ ບຸນສະຫວາດ ບຸບຜາ ຮອງລັດຖະມົນຕີກະຊວງຍຸຕິທຳ ໄດ້ເຂົ້າພົບປະ ທ່ານ ສົມສະໜິດ ບຸດຕີວົງ ຮອງເລຂາພັກແຂວງ, ຮອງເຈົ້າແຂວງ ຈຳປາສັກ. ທ່ານໄດ້ກ່າວຈຸດປະສົງໃນການລົງມາພົບປະໃນຄັ້ງນີ້ ພ້ອມທັງສະຫຼຸບຕີລາຄາ ແລະ ສະພາບການຈັດຕັ້ງປະຕິບັດວຽກຈົດໝາຍເຫດທາງລັດຖະການ, ຄວາມໝາຍຄວາມສຳຄັນຂອງວຽກງານດັ່ງກ່າວ. ຫຼັງຈາກນັ້ນ ທາງຄະນະນຳກະຊວງຍຸຕິທຳ ພ້ອມດ້ວຍຄະນະ ກໍໄດ້ເປີດກອງປະຊຸມຮ່ວມກັບຄະນະຜູ້ປະສານງານຂອງແຂວງ ເພື່ອປຶກສາຫາລື, ແລກປ່ຽນບົດຮຽນ.

- ທ່ານ ໝູກອນ ຄຳພູມີ ຫົວໜ່ວຍງານ ໄດ້ລາຍງານສະພາບການເຄື່ອນໄຫວໃນໄລຍະຜ່ານມາ ການສົ່ງນິຕິກຳມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີການສົ່ງນິຕິກຳ ເພື່ອບໍ່ໃຫ້ເກີດບັນຫານິຕິກຳຕົກເຮ່ຍເສຍຫາຍ.

- ທ່ານ ນ. ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ໄດ້ນຳສະເໜີກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການໃນໄລຍະຜ່ານມາ, ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ທິດທາງແຜນການໃນຕໍ່ໜ້າ, ຊຶ່ງທ່ານກໍໄດ້ມີການບັນຍາຍແຕ່ລະບັນຫາຢ່າງລະອຽດ, ຈາກນັ້ນທ່ານກໍໄດ້ສະເໜີໃຫ້ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງເປັນຜູ້ປະສານງານນັ້ນຮັບຮູ້ເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນການເກັບໂຮມບັນດານິຕິກຳທີ່ຢູ່ໃນຄວາມຮັບຜິດຊອບຂອງພາກສ່ວນຕົນນັ້ນມາພິມລົງໃນຈົດໝາຍເຫດທາງລັດຖະການ ເຮັດໃຫ້ບັນດານິຕິກຳເຫຼົ່ານັ້ນມີຜົນສັກສິດຕາມກົດໝາຍ. ຫຼັງຈາກນັ້ນກໍໄດ້ສະເໜີກ່ຽວກັບຄວາມຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດທີ່ຜ່ານມາ ເປັນຕົ້ນ ຂອດປະສານງານ ລະຫວ່າງ ຜູ້ຮັບຜິດຊອບຂອງກະຊວງຍຸຕິທຳກັບຜູ້ປະສານງານຂັ້ນແຂວງ ແລະ ການສົ່ງນິຕິກຳຂອງແຂວງ ມາລົງໃນຈົດໝາຍເຫດທາງລັດຖະການ, ທ່ານຍັງໄດ້ເນັ້ນຕື່ມອີກວ່າ ຖ້າຜູ້ປະສານງານແຂວງໃດຫາກໄດ້ຮັບການຍົກຍ້າຍໄປຮັບໜ້າທີ່ໃໝ່ ຢາກໃຫ້ຄະນະພັກ-ຄະນະນຳຂອງແຂວງມີການແຕ່ງຕັ້ງໃໝ່ ແລ້ວແຈ້ງໄປຫາຜູ້ຮັບຜິດຊອບຂອງກະຊວງຍຸຕິທຳ ເພື່ອຮັບຊາບ.

- ທ່ານ ວິຊຽນ ສົມບູນຂັນ ຮອງຫົວໜ້າຫ້ອງວ່າການແຂວງ, ຜູ້ຊີ້ນຳຂະແໜງຈັດຕັ້ງບໍລິຫານ ແລະ ການເງິນ, ທ່ານຮອງຫົວໜ້າພະແນກຍຸຕິທຳແຂວງ ຈຳປາສັກ, ກໍໄດ້ປະກອບຄຳເຫັນໃນກອງປະຊຸມໃນຄັ້ງນີ້ວ່າ: ຂໍໃຫ້ຜູ້ປະສານ

ງານທີ່ຖືກແຕ່ງຕັ້ງມີການປະສານສົມທົບວຽກງານໃຫ້ເປັນປົກກະຕິ, ພ້ອມປະຕິບັດໜ້າທີ່ຂອງຕົນໃຫ້ມີຜົນສຳເລັດໃນລະດັບທີ່ສູງຂຶ້ນ.

- ໃນຕອນທ້າຍ ທ່ານປະທານ ຈຶ່ງໄດ້ກ່າວຕື່ມວ່າ ການລົງມາພົບປະໃນຄັ້ງນີ້ ກໍ່ເພື່ອແລກປ່ຽນ, ປຶກສາຫາລື, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ກັບການນໍາຂອງແຂວງ ແລະ ຜູ້ປະສານງານຂອງແຂວງ ເພື່ອພ້ອມກັນແກ້ໄຂຈຸດບົກຜ່ອງ ແລະ ກ້າວໄປເຖິງບັນລຸຜົນສຳເລັດເຂົ້າໃນວຽກງານ.

## 4. <u>ວັນທີ 30 ມີນາ 2018 ເຄື່ອນໄຫວວຽກງານຢູ່ ແຂວງສະຫວັນນະເຂດ</u>

- ໃນຕອນເຊົ້າ ຂອງວັນທີ 30 ມີນາ 2018 ທ່ານ ບຸນສະຫວາດ ບຸບຜາ ຮອງລັດຖະມົນຕີກະຊວງຍຸຕິທຳ ໄດ້ເຂົ້າພົບປະ ທ່ານ ປອ. ໂພໄຊ ໄຊຍະສອນ ກຳມະການສຳຮອງສູນກາງພັກ ຮອງເລຂາພັກແຂວງ ຮອງເຈົ້າແຂວງສະຫວັນນະເຂດ. ທ່ານໄດ້ກ່າວຈຸດປະສົງໃນການລົງມາພົບປະໃນຄັ້ງນີ້ແມ່ນເພື່ອມາປຶກສາຫາລື, ແລກປ່ຽນບົດຮຽນ ແລະ ຊຸກຍູ້ ໃນການແກ້ໄຂຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງຕ່າງໆ.

- ທ່ານ ພົງຄຳຮັກ ບຸດທະວົງ ຮອງຫົວໜ້າຫ້ອງວ່າການ ລາຍງານໂດຍຫຍໍ້ກ່ຽວກັບການປະຕິບັດວຽກໃນໄລຍະຜ່ານມາ ແມ່ນໄດ້ເຂົ້າຮ່ວມກອງປະຊຸມວຽກງານຈົດໝາຍເຫດທາງລັດຖະການ ຢູ່ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ ພ້ອມດຽວກັນນັ້ນກໍໄດ້ມີຂໍ້ຕົກລົງຂອງທ່ານເຈົ້າແຂວງ ໃນການແຕ່ງຕັ້ງຄະນະຜູ້ປະສານງານຈົດໝາຍເຫດທາງລັດຖະການການຂັ້ນແຂວງ ຕາມຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບ ເລກທີ 40/ນຍ, ລົງວັນທີ 11 ສິງຫາ 2015, ທ່ານຍັງໄດ້ກ່າວວ່າ ເຖິງແມ່ນວ່ານິຕິກຳຂອງແຂວງເຮົາຈະເສດສູນ ແຕ່ໃນຄວາມເປັນຈິງແລ້ວນັ້ນນິຕິກຳຂອງແຂວງແມ່ນມີຫຼາຍ ປັດຈຸບັນກຳລັງລວບລວມບັນດານິຕິກຳ ແລະ ໄດ້ມີການປຶກສາຫາລືກັບພະແນກຍຸຕິທຳແຂວງ ໃນການສົ່ງນິຕິກຳໄປລົງຈົດໝາຍເຫດ ນິຕິກຳໃດສາມາດລົງໄດ້ ແລະ ນິຕິກຳໃດສາມາດນຳໃຊ້ໄດ້ພາຍຫຼັງລົງລາຍເຊັນ, ເລື່ອງຂອດປະສານງານກໍຈະປັບປຸງແກ້ໄຂບັນຫາຕ່າງໆນຳກັນຕື່ມອີກ ທ່ານຍັງໃຫ້ຄຳໝັ້ນສັນຍາອີກວ່າໃນຕໍ່ໜ້ານິຕິກຳຂອງແຂວງສະຫວັນນະເຂດ ຈະຖືກຕີພິມລົງໃນເວັບໄຊໃຫ້ມີຫຼາຍກວ່າໃນໄລຍະຜ່ານມາ.

- ທ່ານ ນ. ຄອນສະຫວັນ ສາວະລີ ຮອງຫົວໜ້າກົມໂຄສະນາເຜີຍແຜ່ກົດໝາຍ ທ່ານກໍໄດ້ລາຍງານຈຸດປະສົງຕົ້ນຕໍໃນການລົງມາພົບປະໃນຄັ້ງນີ້ກໍ່ເພື່ອລົງມາຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດ ພ້ອມກັນແກ້ໄຂ ບັນດາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆນັ້ນ ເພື່ອເຮັດໃຫ້ວຽກງານຈົດໝາຍເຫດທາງລັດຖະການຂອງແຂວງມີຜົນຂຶ້ນກວ່າເກົ່າ ແລະ ທັງເຮັດໃຫ້ພາກສ່ວນຕ່າງໆສາມາດຮັບຮູ້ ແລະ ດຶງດູດບັນດານັກລົງທຶນທີ່ຈະມາລົງທຶນພາຍໃນແຂວງນັ້ນໃຫ້ຫຼາຍ ແລະ ທ່ານຍັງໄດ້ກ່າວຕື່ມອີກວ່າ ຖ້າບັນດານິຕິກຳໃດທີ່ເປັນຕົ້ນນິຕິກຳຍ້ອນຫຼັງທີ່ຍັງໃຊ້ໄດ້ກໍສາມາດສົ່ງມາລົງໃນເວັບໄຊ້ໄດ້ຄືກັນ.

ຫຼັງຈາກນັ້ນ ກໍໄດ້ມີການປຶກສາຫາລື, ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ທ່ານປະທານກໍໄດ້ສະຫຼຸບວຽກງານ ແລະ ກ່າວປິດກອງປະຊຸມໃນເວລາຕໍ່ມາ.

# III. <u>ດ້ານດີໃນການເຄື່ອນໄຫວກັບບັນດາແຂວງ</u>

❖ <u>ດ້ານດີ</u>

- ຜູ້ປະສານງານມາຈາກຂະແໜງການ ຫຼື ໜ່ວຍງານທີ່ຮັບຜິດຊອບໂດຍກົງໃນການສ້າງ, ການຄົ້ນຄວ້າ ແລະ ການຈໍລະຈອນນິຕິກຳ ຈຶ່ງເຮັດໃຫ້ບັນດານິຕິກຳ ທີ່ຖືກຮັບຮອງ ແລະ ລົງລາຍເຊັນນັ້ນໄດ້ຖືກພິມລົງຈົດໝາຍເຫດທັນຕາມກຳນົດເວລາ

- ການເອົາໃຈໃສ່ຂອງພະນັກງານຜູ້ປະສານງານຂັ້ນແຂວງ ມີຄວາມຮັບຜິດຊອບສູງ ໃນການເກັບກຳສັງລວມບັນດານິຕິກຳຕ່າງໆຂອງແຂວງ ເປັນຕົ້ນ: ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳຂອງເຈົ້າແຂວງໄດ້ຈຳນວນໜຶ່ງສົ່ງໃຫ້ກະຊວງຍຸຕິທຳ ກົມໂຄສະນາເຜີຍແຜ່ກົດໝາຍ ເອົາລົງເວັບໄຊແລ້ວ;
- ການປະສານງານຂອງຄະນະປະສານງານລະຫວ່າງກະຊວງຍຸຕິທຳ ແລະ ຂັ້ນແຂວງ ແມ່ນໄດ້ຕິດຕໍ່ພົວພັນ ແລະ ສົ່ງນິຕິກຳໂດຍກົງ ດັ່ງນັ້ນ ຈຶ່ງເຮັດໃຫ້ເອກະສານນຳສົ່ງມີຄວາມວ່ອງໄວ ແລະ ພິມລົງທັນຕາມກຳນົດເວລາ;
- ນິຕິກຳຂອງແຂວງມີຈຳນວນເພີ່ມຂຶ້ນ.

❖ **<u>ສາເຫດທີ່ພາໃຫ້ດີ</u>**

- ຍ້ອນຄະນະພັກ-ຄະນະນຳຂອງແຂວງໄດ້ມີຄວາມເອົາໃຈໃສ່ຢ່າງສູງຕໍ່ການຊີ້ນຳ-ນຳພາຕໍ່ວຽກງານຈົດໝາຍເຫດທາງລັດຖະການໃນລະບົບເອເລັກໂຕຣນິກ;
- ຍ້ອນມີການປະສານງານມີການຮ່ວມມືຊ່ວຍເຫຼືອ ແລະ ແນະນຳຂັ້ນຕອນ, ວິທີການຕ່າງໆໃຫ້ມີການແລກປ່ຽນບົດຮຽນຊຶ່ງກັນ ແລະ ກັນຜ່ານທາງລະບົບອອນລາຍ ໃນການເກັບກຳສັງລວມນິຕິກຳຢ່າງເປັນປົກກະຕິ;

❖ **<u>ດ້ານອ່ອນໃນການເຄື່ອນໄຫວກັບບັນດາແຂວງ</u>**

- ບັນດານິຕິກຳທີ່ມີລັກສະນະທົ່ວໄປນັ້ນແມ່ນມີໜ້ອຍ ໃນການສົ່ງນິຕິກຳຈຶ່ງບໍ່ຕໍ່ເນື່ອງ;
- ການສົ່ງເອກະສານທາງໄປສະນີໃນໄລຍະຜ່ານມາແມ່ນສົ່ງບໍ່ຮອດເປົ້າໝາຍ;
- ນິຕິກຳຕ່າງໆທີ່ກ່ຽວຂ້ອງທີ່ຈະເກັບກຳສັງລວມນັ້ນ ສ່ວນຫຼາຍແມ່ນພາກສ່ວນອື່ນເປັນຜູ້ສ້າງ ແລະ ເວລາເຊັນອອກແລ້ວຜູ້ປະສານງານຂັ້ນແຂວງກໍບໍ່ຮັບຮູ້ນຳ;
- ບາງແຂວງຍັງບໍ່ທັນມີຄວາມເຂົ້າໃຈ ໃນການສົ່ງນິຕິກຳຂອງແຂວງມາພິມລົງໃນເວັບໄຊ໌ຈົດໝາຍເຫດທາງລັດຖະການ ເພື່ອເຮັດໃຫ້ນິຕິກຳເຫຼົ່ານັ້ນມີຜົນສັກສິດຕາມກົດໝາຍ;
- ບັນດາແຂວງສ່ວນຫຼາຍແມ່ນຍັງບໍ່ທັນມີຄວາມຕື່ນຕົວໃນການເກັບໂຮມບັນດານິຕິກຳຂອງແຂວງ ເພື່ອພິມລົງຈົດໝາຍເຫດ;
- ຂອດການປະສານສົມທົບລະຫວ່າງແຂວງກັບກະຊວງຍຸຕິທຳຍັງບໍ່ທັນເປັນປົກກະຕິ;

❖ **<u>ສາເຫດທີ່ພາໃຫ້ອ່ອນ</u>**

- ຄະນະນຳຂອງບາງແຂວງຍັງບໍ່ທັນຮັບຮູ້ ແລະ ເອົາໃຈໃສ່ໃກ້ຊິດຕິດແທດກັບຜູ້ປະສານງານເທົ່າທີ່ຄວນ;
- ເວລາແຕ່ງຕັ້ງພະນັກງານຜູ້ປະສານງານ ບໍ່ໄດ້ເອົາພະນັກງານທີ່ສັງກັດຢູ່ໜ່ວຍງານຂາເຂົ້າ-ຂາອອກ ເຂົ້ານຳ ຈຶ່ງມີຄວາມຫຍຸ້ງຍາກໃນການເກັບກຳລັງລວມນິຕິກຳ;
- ບຸກຄະລາກອນ ທີ່ໄດ້ຮັບການຝຶກອົບຮົມແລ້ວນັ້ນ ໄດ້ຖືກແຕ່ງຕັ້ງໄປຮັບໜ້າທີ່ໃໝ່ ຈຶ່ງເຮັດໃຫ້ຂອດການປະສານງານບໍ່ຕໍ່ເນື່ອງ;

## IV. <u>ທິດທາງແກ້ໄຂໃນຕໍ່ໜ້າ</u>

- ຄະນະພັກ ຄະນະນຳກະຊວງຍຸຕິທຳ ກົດໜ່ວຍງານທີ່ຮັບຜິດຊອບວຽກງານ ຕ້ອງສືບຕໍ່ລົງມາຊຸກຍູ້ ແລະ ຊອກຫາວິທີແກ້ໄຂ ບາງແຂວງທີ່ຍັງບໍ່ເຄື່ອນໄຫວ ຫຼື ຍັງບໍ່ທັນສົ່ງນິຕິກຳ ລວມເຖິງສິ່ງທ້າທາຍໃນການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການ ເພື່ອຮ່ວມກັນຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ, ເກັບກຳຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ວິທີແກ້ໄຂ ເພື່ອບັນລຸໄດຕາມລະດັບຄາດໝາຍ. ຕອບສະໜອງງົບປະມານໃນການຈັດຝຶກອົບຮົມໃຫ້ຜູ້ປະສານງານຢ່າງເປັນລະບົບ;

- ຄະນະພັກ ຄະນະນຳຂອງບັນດາແຂວງ ຕ້ອງໄດ້ເອົາໃຈໃສ່ເຂົ້າໃນວຽກງານ ແລະ ໃກ້ຊິດຕິດແທດກັບຜູ້ເຮັດວຽກຕົວຈິງກໍຄືຜູ້ປະສານງານທີ່ໄດ້ຮັບການແຕ່ງຕັ້ງນັ້ນ ເພື່ອເຮັດໃຫ້ວຽກງານດັ່ງກ່າວຖືກຈັດຕັ້ງປະຕິບັດຕາມລະບົບ ແລະ ມີປະສິດທິຜົນ; ການນຳຂອງແຂວງແຕ່ລະຂັ້ນຄວນຕອບສະໜອງວັດຖຸປະກອນ, ງົບປະມານ ແລະ ອຳນວຍເງື່ອນໄຂດ້ານອື່ນໆ ໃຫ້ຜູ້ປະສານງານເຄື່ອນໄຫວຢ່າງມີປະສິດທິຜົນ;
- ຜູ້ປະສານງານທີ່ໄດ້ຜ່ານການຝຶກອົບຮົມແລ້ວ ຕ້ອງເອົາໃຈໃສ່ຕິດຕາມ ແລະ ປະສານສົມທົບກັບພາກສ່ວນທີ່ສ້າງ ແລະ ປັບປຸງນິຕິກຳ ເພື່ອເອົາບັນດານິຕິກຳທີ່ອອກໃໝ່ ພິມລົງໃນຈົດໝາຍເຫດທາງລັດຖະການໃຫ້ທັນຕາມກຳນົດເວລາ;
- ສືບຕໍ່ປັບປຸງລະບົບກົງຈັກຂອງຜູ້ປະສານງານທີ່ມີການຍົກຍ້າຍ ຫຼື ເຂົ້າຮັບເບັ້ຍບຳນານ ຄວນສະເໜີໃຫ້ມີການແຕ່ງຕັ້ງໃໝ່ ແລ້ວແຈ້ງມາຫາກະຊວງຍຸຕິທຳ;
- ແຂວງໃດທີ່ເຮັດໄດ້ດີ ຄວນມີການສະເໜີຍ້ອງຍໍຕາມແຕ່ລະຂັ້ນ ແລະ ແຂວງນດທີ່ເຄື່ອນໄຫວບໍ່ໄດ້ດີ ກໍຄວນມີການປັບປຸງ ແລະ ປະຕິບັດວິໄນຕາມລະບຽບການ.

## V. ພາກສະເໜີ

- ສະເໜີໃຫ້ກະຊວງຍຸຕິທຳ ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຈົດໝາຍເຫດທາງລັດຖະການຢູ່ຂັ້ນແຂວງໃຫ້ຫຼາຍຂຶ້ນຕື່ມ;
- ສະເໜີການນຳແຂວງແຕ່ງຕັ້ງຄະນະປະສານງານຈົດໝາຍເຫດທາງລັດຖະການເພີ່ມຕື່ມ ເພື່ອໃຫ້ແທດເໝາະກັບໜ້າວຽກຕົວຈິງ;
- ຢາກໃຫ້ມີການຝຶກອົບຮົມແລກປ່ຽນປີລະຄັ້ງ ໃນແຕ່ລະພາກ ຫຼື ທົ່ວປະເທດ ເພື່ອຖອດຖອນບົດຮຽນ ແລະ ຕີລາຄາຮ່ວມກັນ;
- ວິທີການຝາກເອກະສານຄວນເຮັດແນວໃດ? ເພື່ອບໍ່ໃຫ້ນິຕິກຳຕົກເຮ່ຍເສຍຫາຍຄືໄລຍະຜ່ານມາ.

**ຫົວໜ້າກົມ**

ພູທອນ ແກ້ວດວງມະນີ